# ແສງສະຫວ່າງແຫ່ງໂຮງຮຽນລົ້ວຊົ່ງຕີ້

ທ່ານ ນົງເຈ່ຍກຸ້ຍ (Nong Jiagui), ຜູ້ແທນສະພາປະຊາຊົນແຫ່ງຊາດຈີນ, ຄູໂຮງຮຽນປະຖົມລົ້ວຊົ່ງຕີ້ (Luo songdi), ຕາແສງລຽນເຊີງ, ເມືອງກວາງນານ, ກິ່ງແຂວງປົກຄອງຕົນເອງເຜົ່າຈ້ວງເຜົ່າມົ້ງ ເວີນຊ່ານ, ແຂວງຢຸນນານ. ເມື່ອຫຼາຍປີກ່ອນ, ໃນຕອນທີ່ບ້ານນ້ອຍໆທີ່ບໍ່ມີຊື່ແຫ່ງນີ້ຍັງຖືກເອີ້ນວ່າ "ບ້ານຂີ້ທູດ", ລາວໄດ້ມາບ່ອນນີ້ພຽງລຳພັງ ແລະ ກາຍເປັນຄູພຽງແຕ່ຄົນດຽວຂອງໂຮງຮຽນປະຖົມໃນບ້ານ. ບ້ານໃນຊົນນະບົດແຫ່ງໜຶ່ງ, ໂຮງຮຽນປະຖົມຫຼັງໜຶ່ງ ແລະ ຄົນໜຶ່ງ, ລາວຢູ່ບ່ອນນີ້ເປັນເວລາ 40 ປີ.







### ຢູ່ຕໍ່ໄປ

ເມື່ອ 40 ປີກ່ອນ, ໂຮງຮຽນປະຖົມລົ້ວຊົ່ງຕີ້ເຄີຍເປັນສູນປິ່ນປົວຜູ້ປ່ວຍພະຍາດຫູວງ (ຂີ້ທູດ) ມາກ່ອນ, "ບ້ານຂີ້ທູດ" ຊື່ເອີ້ນທີ່ບາດຫູນີ້, ໄດ້ຕັດຂາດບ້ານໃນຊົນນະບົດແຫ່ງນີ້ຈາກໂລກພາຍນອກ. ໃນປີ 1986, ອາຈານ ນົງເຈ່ຍກຸ້ຍ ໃນໄວ 20 ປີໄດ້ມາຊົນນະບົດແຫ່ງນີ້ໃນຖານະຄູສັນຍາຈ້າງ.

"ຕອນທຳອິດທີ່ເຫັນຜູ້ສູງອາຍຸທີ່ພິການ, ຂ້ອຍຢາກຈະໜີ." ອາຈານ ນົງເຈ່ຍກຸ້ຍ ກ່າວແບບກົງໄປກົງມາ, "ແຕ່ເມື່ອໄດ້ເຫັນແວວຕາຂອງເດັກນ້ອຍທີ່ຫິວກະຫາຍຄວາມຮູ້, ຂ້ອຍບໍ່ສາມາດກ້າວຂາແລ່ນໜີໄປໄດ້."

ລາວຕັດສິນໃຈຢູ່ຕໍ່, ແຕ່ສິ່ງທີ່ຕ້ອງປະເຊີນໜ້ານັ້ນຍາກລຳບາກກວ່າທີ່ຄິດໄວ້ຫຼາຍ, ກໍຄືບໍ່ມີຫ້ອງຮຽນ, ປຶ້ມຮຽນບໍ່ພຽງພໍ, ບໍ່ມີເຈ້ຍເສັ້ງ... ດ້ວຍເຫດນີ້ລາວຈຶ່ງໄດ້ຂໍຢືມຫ້ອງຂະໜາດ 20 ຕາລາງແມັດຈາກໂຮງໝໍ, ເລາະຊອກປຶ້ມເກົ່າ, ຂຽນຂໍ້ສອບເສັ້ງໃສ່ກະດານດຳ...

ອາຄານຮຽນຫຼັງໃໝ່ແມ່ນທຸກຄົນໃນບ້ານຮ່ວມແຮງຮ່ວມໃຈກັນສ້າງ. "ຄົນທີ່ມີກຸດກໍໃຊ້ລຳແຂນໜີບຈົກ, ຄົນທີ່ຕີນກຸດກໍໃຊ້ຢາງລົດເກົ່າຮອງຫົວເຂົ່າ. ສິ່ງທີ່ເຮັດໃຫ້ຂ້ອຍປະທັບໃຈທີ່ສຸດແມ່ນບັນດາຜູ້ສູງອາຍຸທີ່ພິການ ແລະ ຢູ່ລຳພັງ, ແມ່ນວ່າໃນເຮືອນຈະບໍ່ມີເຄື່ອງມືອອກແຮງງານ, ແຕ່ກໍຍັງນຳໄມ້ດ້າມສຳລັບແຕ່ງກິນຂອງຕົວເອງມາຄູ້ເຂົ່າປະສົມປູນຢູ່ເຂດກໍ່ສ້າງ."

ນອກຈາກຄວາມລຳບາກຂັດສົນດ້ານການຮຽນການສອນແລ້ວ, ຍັງມີແຮງກົດດັນຈາກຄົນອ້ອມຂ້າງທີ່ "ປ່ຽນສີໜ້າເມື່ອເວົ້າເຖິງພະຍາກຂີ້ທູດ". ອາຈານ ນົງເຈ່ຍກຸ້ຍ ເລົ່າຄວາມຫຼັງວ່າ ໃນຕອນທີ່ໄປເຂົ້າຮ່ວມປະຊຸມຢູ່ໂຮງຮຽນກາງ, ອາຈານຜູ້ອື່ນທີ່ຮູ້ວ່າລາວມາຈາກ "ບ້ານຂີ້ທູດ" ຕ່າງກໍບໍ່ກ້ານັ່ງໃກ້ລາວ. ເວລາທີ່ກັບເມືອເຮືອນໃນວັນເສົາອາທິດ, ຄົນໃນຄອບຄົວກໍແຕ່ງກິນໃຫ້ລາວຕ່າງຫາກ ແລະ ແຍກລ້າງຖ້ວຍບ່ວງ.

ໂຮງຮຽນມີຄູພຽງແຕ່ຄົນດຽວ, ວິຊາວັນນະຄະດີ, ວິຊາຄະນິດສາດ, ວິຊາຈະລິຍະທຳ ແລະ ວິຊາອື່ນໆລ້ວນແຕ່ແມ່ນຄູຜູ້ດຽວສອນ, ແຕ່ອາຈານ ນົງເຈ່ຍກຸ້ຍ ກໍກັດແຂ້ວຝ່າຟັນມາໄດ້. ສິ່ງທີ່ເຮັດໃຫ້ລາວພູມໃຈແມ່ນ ໃນຕອນທີ່ນັກຮຽນຊຸດທຳອິດຈົບການສຶກສາ, ຄະແນນຂອງທຸກຄົນລ້ວນແຕ່ຜ່ານເກນມາດຕະຖານ. ໃນຕະຫຼອດ 40 ປີ, ອາຈານ ນົງເຈ່ຍກຸ້ຍ ໄດ້ສອນໜັງສືແບບຄວບຊັ້ນ (ນັກຮຽນຫຼາຍລະດັບໃນຫ້ອງດຽວ), ໂດຍໄດ້ກໍ່ສ້າງນັກຮຽນ 12 ຊຸດ ຈຳນວນ 126 ຄົນ, ພວກເຂົາຕ່າງກໍສາມາດອອກໄປປະກອບອາຊີບໄດ້ຢ່າງບໍ່ມີອຸປະສັກ.

### ສືບທອດປະນິທານ

"ຫາກໃນຕອນນັ້ນ ອາຈານ ນົງເຈ່ຍກຸ້ຍ ເກີດລັງເລ ແລະ ບໍ່ອົດທົນຢູ່ຕໍ່, ພວກເຮົາກໍຄົງຈະບໍ່ມີວັນໄດ້ກ້າວອອກຈາກຊົນນະບົດແຫ່ງນີ້." ນີ້ແມ່ນຄຳເວົ້າທີ່ລູກສິດໄດ້ກ່າວກັບລາວ.

ເພື່ອໃຫ້ເດັກນ້ອຍໄດ້ອອກໄປສູ່ໂລກພາຍນອກ, ອາຈານ ນົງເຈ່ຍກຸ້ຍ ໄດ້ລົງຫຼັກປັກຖານຢູ່ບ້ານລົ້ວຊົ່ງຕີ້, ແຕ່ວ່າຕອນນີ້ມີບັນຫາໃຫຍ່ເກີດຂຶ້ນ. "ປີນີ້ຂ້ອຍຈະບຳນານແລ້ວ, ເດືອນພຶດສະພາ, ຊ້າສຸດແມ່ນເດືອນຕຸລາ. ຈະປ່ອຍໃຫ້ໂຮງຮຽນຕ້ອງຢຸດການຮຽນການສອນຍ້ອນຂ້ອຍບຳນານບໍ່ໄດ້."

"ໃນປີ 2020 ມີຄູຄົນໃໝ່ຄົນໜຶ່ງຖືກຊັບຊ້ອນມາ, ເປັນຄູຜູ້ຍິງທີ່ຍັງໜຸ່ມນ້ອຍ." ອາຈານ ນົງເຈ່ຍກຸ້ຍ ກ່າວວ່າ ອາຈານ ຈູ່ລີ້ຕ່ານ ໄດ້ໂທບຫາຕົນກ່ອນມາ, "ນາງກ່າວວ່າ ໂຮງຮຽນຂອງພວກເຈົ້າມີຊື່ສຽງຫຼາຍ, ຂໍຖາມແນ່ ມີຄູຜູ້ຍິງຈັກຄົນ? ເມື່ອໄດ້ຍິນ ຂ້ອຍຮູ້ທັນທີວ່າ ນາງຍັງບໍ່ເຂົ້າໃຈສະພາບຄວາມເປັນຈິງຂອງໂຮງຮຽນ."

ອາຈານ ນົງເຈ່ຍກຸ້ຍ ໄປຫາ ອາຈານ ຈູ່ລີ້ຕ່ານ, ເພື່ອບອກນາງແບບເຊິ່ງໜ້າ: "ຄຳຖາມທີ່ເຈົ້າຖາມ ຂ້ອຍບໍ່ຊ່າງຊິຕອບ, ໂຮງຮຽນຂອງພວກເຮົາບໍ່ພຽງແຕ່ບໍ່ມີຄູຜູ້ຍິງ, ແມ່ນແຕ່ຄູຜູ້ຊາຍກໍມີແຕ່ຂ້ອຍຜູ້ດຽວ..."

ເມື່ອ ອາຈານ ຈູ່ລີ້ຕ່ານ ຟັງຈົບ, ກໍຢືນງົງຢູ່ບ່ອນເກົ່າ ແລະ "ຫີ" ຮ້ອງໄຫ້ອອກມາ. ຜ່ານໄປບໍ່ເທົ່າໃດມື້, ອາຈານ ຈູ່ລີ້ຕ່ານ ໄດ້ເດີນທາງມາ ບ້ານລົ້ວຕີ້ຊົ່ງ ແບບບໍ່ໄດ້ແຈ້ງກ່ອນລ່ວງໜ້າ. ນາງຈ້ອງເບິ່ງໂຮງຮຽນໄລຍະໜຶ່ງ ແລ້ວກໍຍ່າງໄປຫາ ອາຈານ ນົງເຈ່ຍກຸ້ຍ ພ້ອມທັງກ່າວວ່າ " ອາຈານນົງ ຂ້ອຍຢາກລອງເບິ່ງ."

"ໂຮງຮຽນມີຄູຄົນໃໝ່ມາ, ເດັກນ້ອຍພາກັນດີໃຈຫຼາຍ, ແຕ່ລະມື້ນຳຫາແຕ່ ອາຈານຈູ່ ພ້ອມທັງເລົ່າໃຫ້ນາງຟັງວ່າ ໂຮງຮຽນດີແບບໃດ, ໃນບ້ານມີບ່ອນໃດເປັນຕາໄປຫຼິ້ນ." ເດັກນ້ອຍໃກ້ຊິດສະໜິດສະໜົມກັບ ອາຈານ ຈູ່ລີ້ຕ່ານ ເປັນຢ່າງດີ, ໃນແວວຕາເຕັມໄປດ້ວຍຄວາມຄາດຫວັງ, ສຸດທ້າຍນາງກໍຕັດສິນໃຈຢູ່ຕໍ່, ມາຈົນເຖິງປັດຈຸບັນກໍ 5 ປີແລ້ວ ແກ່ນແທ້ຂອງການສຶກສາແມ່ນຄວາມສຳພັນລະຫວ່າງຄົນກັບຄົນ.

### ລົ້ວຊົ່ງຕີ້

ໃນເດືອນມີນາ 2026 ນີ້, ອາຈານ ນົງເຈ່ຍກຸ້ຍ ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາຜູ້ແທນປະຊາຊົນແຫ່ງຊາດຈີນ ເພື່ອເຂົ້າຮ່ວມກອງປະຊຸມຄັ້ງທີ 4 ຂອງສະພາຜູ້ແທນປະຊາຊົນແຫ່ງຊາດ ສະໄໝທີ 14 ທີ່ນະຄອນຫຼວງປັກກິ່ງ.

ໃນມື້ເປີດກອງປະຊຸມສອງສະພາ, ຢູ່ປັກກິ່ງມີຫິມະຕົກ, ອາຈານ ນົງເຈ່ຍກຸ້ຍ ຄິດວ່າຢູ່ຢຸນນານ ບໍ່ຄ່ອຍເຫັນຫິມະ, ດັ່ງນັ້ນຈຶ່ງໄດ້ຖ່າຍຮູບສົ່ງໄປ, ບໍ່ດົນກໍໄດ້ຮັບຂໍ້ຄວາມຕອບກັບຈາກບັນດາເດັກນ້ອຍນັກຮຽນ: ອາຈານນົງ ຢູ່ປັກກິ່ງຫິມະຕົກ, ອາກາດໜາວຫຼາຍ, ໃຫ້ຮັກສາສຸຂະພາບເດີ້, ຢ່າເປັນຫວັດ, ຕັ້ງໃຈເຂົ້າຮ່ວມກອງປະຊຸມ, ພວກເຮົາຈະຕັ້ງໃຈຮຽນໜັງສືຢູ່ໂຮງຮຽນ, ຖ້າເຈົ້າກັບມາ.

ຫຼັງຈາກລົງມາຈາກ "ຫ້ອງໂຖງປາໄສຂອງຜູ້ແທນ", ເພື່ອນຄູຄົນໜຶ່ງໃນປັກກິ່ງໄດ້ສົ່ງຂໍ້ຄວາມທາງ ວີແຊັດ ຫາ ອາຈານ ນົງເຈ່ຍກຸ້ຍວ່າ: "ຂ້ອຍເຫັນເຈົ້າຢູ່ໃນໂທລະພາບ, ເຈົ້າມາຈາກຢຸນນານ ຄືຊິບໍ່ໄດ້ເອົາເສື້ອໜາໆມານຳ." ເພື່ອນຄູຄົນນັ້ນຢືນຢັນຈະເອົາເສື້ອກັນໜາວມາສົ່ງໃຫ້ຮອດບ່ອນພັກ.

"ຂ້ອຍແມ່ນອາຈານ ແລະ ກໍແມ່ນຜູ້ແທນສະພາປະຊາຊົນ, ກ່ອນໜ້ານີ້ຕັ້ງໃຈເຮັດວຽກດ້ານການສຶກສາໃຫ້ດີກໍພໍແລ້ວ, ແຕ່ຕອນນີ້ມີໜ້າທີ່ຮັບຜິດຊອບເພີ່ມມາອີກຢ່າງໜຶ່ງ." ທຸກສົກຮຽນ, ອາຈານ ນົງເຈ່ຍກຸ້ຍ ຈະໃຊ້ເວລາຫຼັງເລີກຮຽນ ຫຼື ວັນເສົາອາທິດ ຂັບລົດສ່ວນຕົວໄປໂຮງຮຽນເຂດຫ່າງໄກສອກຫຼີກໃນເມືອງກວາງນານ, ເພື່ອເກັບກຳຄວາມຕ້ອງການ ແລະ ຄວາມຄິດເຫັນຂອງຊາວບ້ານ.

"ນີ້ແມ່ນໜ້າທີ່ ທີ່ເຮົາຕ້ອງເຮັດ. ໃນຖານະຜູ້ແທນສະພາປະຊາຊົນ ຖ້າເລື່ອງເຫຼົ່ານີ້ຍັງບໍ່ເຮັດ ແລະ ບໍ່ເຂົ້າໃຈຫາງສຽງປະຊາຊົນ, ນັ້ນກໍແປວ່າບໍ່ຫຼ້ອນໜ້າທີ່."

ບັນຫາທີ່ ອາຈານ ນົງເຈ່ຍກຸ້ຍ ໃຫ້ຄວາມສົນໃຈໃນປັດຈຸບັນແມ່ນປະກົດການຈິງທີ່ເກີດຂຶ້ນກັບການສຶກສາໃນຊົນນະບົດ ຈະບໍລິຫານຈັດການໂຮງຮຽນປະຖົມຂະໜາດນ້ອຍທີ່ຈຳເປັນໃນຊົນນະບົດໃຫ້ດີໄດ້ແນວໃດ, ຈະໃຊ້ຈຸດແຂງຂອງຄູໃນຊົນນະບົດທີ່ເບິ່ງແຍງທັງການຮຽນ ແລະ ການເປັນຢູ່ຂອງນັກຮຽນໄດ້ຢ່າງຖືກເປົ້າໝາຍໄດ້ແນວໃດ, ຈະປັບປຸງສະຫວັດດີການຂອງຄູໃນຊົນນະບົດໃຫ້ດີຂຶ້ນໄດ້ແນວໃດ...

ວັນທີ 5 ມີນາ 2026 ຢູ່ທີ່ຫໍສະພາປະຊາຊົນ ໃນຕອນທີ່ໃຫ້ການສຳພາດຂອງນັກຂ່າວ, ອາຈານ ນົງເຈ່ຍກຸ້ຍ ກ້າວສູ່ "ໂຖງປາໄສຂອງຜູ້ແທນ" ດ້ວຍຄວາມຕື່ນເຕັ້ນ ແລະ ໄດ້ບອກເລົ່າທີ່ມາຂອງຊື່ ບ້ານລົ້ວຊົ່ງຕີ້.

ໃນປີ 1992, ນັກຮຽນຊຸດທຳອິດທີ່ຂ້ອຍສອນໄດ້ຈົບການສຶກສາ, ໃນຕອນທີ່ຕື່ມຂໍ້ມູນຄຳຮ້ອງຂໍຮຽນຕໍ່, ໃນປ່ອງທີ່ຢູ່ຂ້ອຍບໍ່ກ້າຂຽນວ່າ ບ້ານຂີ້ທູດ, ຈຶ່ງໄດ້ປຶກສາຫາລືກັບຊາວບ້ານ ແລະ ຊ່ວຍເຂົາເຈົ້າປ່ຽນເປັນຊື່ທີ່ໃຜກໍບໍ່ຮູ້ວ່າບ້ານແຫ່ງນີ້ຢູ່ໃສ — ບ້ານລົ້ວຊົ່ງຕີ້.

"ຊື່ບ້ານມີທີ່ມາດັ່ງນີ້, ຊາວບ້ານເກັບກ່ຽວຖົ່ວດິນເປັນຈຳນວນຫຼາຍ, ຄົນໃນທ້ອງຖິ່ນເອີ້ນຖົ່ວດິນວ່າ ລົ້ວຊົ່ງ, ປະກອບກັບພວກເຮົາເຄີຍຮຽນບົດຄວາມໃນປຶ້ມບົດຮຽນຊັ້ນປະຖົມບົດໜຶ່ງຊື່ວ່າ 'ໝາກຖົ່ວດິນ', ໂດຍເນື້ອໃນໄດ້ເວົ້າເຖິງຮູບຮ່າງພາຍນອກຂອງຖົ່ວດິນທີ່ເບິ່ງທຳມະດາ, ແຕ່ໝາກຜົນຂອງມັນຝັງເລິກລົງດິນ ແລະ ອຸທິດຕົນຢ່າງງຽບໆ, ຂ້ອຍຈຶ່ງນຶກເຖິງປະຊາຊົນໃນບ້ານລົ້ວຊົ່ງຕີ້, ເຖິງວ່າຮ່າງກາຍຈະພິການ, ແຕ່ຈິດໃຈງົດງາມຫຼາຍ ແລະ ກໍສະໜັບສະໜູນການສຶກສາຢ່າງເຕັມທີ່..."

ອາຈານ ນົງເຈ່ຍກຸ້ຍ ກ່າວເຖິງການປ່ຽນແປງໃໝ່ໆໃນບ້ານລົ້ວຊົ່ງຕີ້ ວ່າ ມີອິນເຕີເນັດແລ້ວ, ຖະໜົນຫົນທາງກໍໄປມາສະດວກ ແລະ ທຸກຄົນກໍຊົມໃຊ້ອຸປະກອນເອເລັກໂຕນິກຫຼາຍຂຶ້ນ. "ທີ່ສຳຄັນແມ່ນ ເດັກນ້ອຍທີ່ອອກໄປຈາກ ບ້ານລົ້ວຊົ່ງຕີ້ ບໍ່ໄດ້ໃສ່ໃຈເລື່ອງພະຍາກຂີ້ທູດອີກຕໍ່ໄປ ແລະ ກໍບໍ່ໄດ້ຖືກດູຖູກ ຫຼື ເລືອກປະຕິບັດ — ສັງຄົມກ້າວໜ້າຫຼາຍແລ້ວ !"

(ສະໜອງຂໍ້ມູນໂດຍ: ວາລະສານ "ຈຳປາ" ທີ່ຂຶ້ນກັບ ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສຽງໃຕ້ ແຂວງຢຸນນານ)

www.yunnangateway.com